**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 1414 /ຍທຂ.
ບໍລິຄຳໄຊ, ວັນທີ 27 ມີ.ນາ 2026

**ໂຄງການ ກໍ່ສ້າງທາງປູຫີນແຮ່ ແຕ່ບ້ານພູຄຳ - ບ້ານປາກໂພຍ, ເມືອງບໍລິຄັນ ແຂວງບໍລິຄຳໄຊ**

**ຫນັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ**

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ ໄດ້ຮັບການຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້ - ຈັດຈ້າງ ໂຄງການ ກໍ່ໂຄງການ ກໍ່ສ້າງທາງປູຫີນແຮ່ ແຕ່ບ້ານພູຄຳ-ບ້ານປາກໂພຍ, ເມືອງບໍລິຄັນ ແຂວງບໍລິຄຳໄຊ, ລວງຍາວ 5 ກິໂລແມັດ ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ, ສຳລັບບ້ວງເງິນທີ່ຈະຊຳລະສະສາງ ແມ່ນຈະໄດ້ສະເໜີເອົາເຂົ້າແຜນສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງແມ່ນ 3 ປີ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມູນຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477 /ກງ, ລົງວັນທີ 13 ກຸມພາ 2019. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄາໄຊ ຫຼື ທົ່ວປະເທດ.
4. ບໍລິສັດທີ່ມີຄວາມເຫມາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ/ແຟັກ: **054-212091**. ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ **8:00 – 12 : 00 ແລະ 13 : 00 - 16:00;** ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ເລີ້ມແຕ່ວັນທີ **1 ເມສາ 2026** ເປັນຕົ້ນໄປ, ໃນລາຄາ **500,000** ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນໃດຫາກຍື່ນຊ້າກ່ອນເວລາ **10:30 ໂມງເຊົ້າ, ຂອງວັນທີ 13 ພຶດສະພາ 2026**; ຈະບໍ່ໄດ້ຮັບພິຈາລະນາ ແລະ ເປີດຊອງ, ເງິນຄ່າຊອງປະມູນຈະບໍ່ໄດ້ສົ່ງຄືນ.
6. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ **(site visit)** ຈະໄດ້ຈັດຂຶ້ນໃນວັນທີ **11 ພຶດສະພາ 2026, ເວລາ 9:00** ໂມງເຊົ້າ.
7. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ

สแกนด้วย CamScanner

ບໍລິຄຳໄຊ **ໃນເວລາ 10:30 ໂມງເຊົ້າ, ຂອງວັນທີ 13 ພຶດສະພາ 2026** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.

8. ເອກະສານປະມູນ ຕ້ອງໄດ້ປະກອບຫນັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ **1.5%** ຂອງມູນຄ່າປະມູນ, ໂດຍຫນັງສືຄໍ້າປະກັນການປະມູນຕ້ອງແມ່ນຫນັງສືຄໍ້າປະກັນຂອງທະນາຄານທີ່ຖືກຕ້ອງກັບແບບຟອມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

ເຊັນແທນຫົວໜ້າພະແນກ
ຮອງຫົວໜ້າພະແນກ

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ
ແຂວງບໍລິຄຳໄຊ

ໂຄລາຈານ ແສນທະວີໄຊ

สแกนด้วย CamScanner